ສຳລັບທ່ານ (ໂດຍຈັດແບ່ງໄປຕາມ ຊົນເຜົ່າ, ເພດ ແລະຄວາມແຕກຕ່າງ ທາງດ້ານສັງຄົມ), ຫລັງຈາກນັ້ນໃຫ້ກຸ່ມເຫລົ່ານັ້ນແຍກກັນ ເຮັດວຽກຕາມກຸ່ມ ຂອງຕົນເອງ ໂດຍນຳໃຊ້ເຄື່ອງມືດຽວກັນ. ວິທີການດັ່ງ ກ່າວນີ້, ຈະຊ່ວຍໃຫ້ເຫັນໄດ້ເຖິງ ພາບລວມ ຂອງ ແຕ່ລະກຸ່ມພາຍໃນບ້ານ ແລະ ມັນຍັງຈະສົ່ງຜົນໃຫ້ ເກີດມີການສົນທະນາກັນເປັນຢ່າງດີໃນເວລາທີ່ກຸ່ມຍ່ອຍ ເຫລົ່ານັ້ນ ລາຍງານຜົນໄດ້ຮັບ ຂອງ ເຂົາເຈົ້າໃຫ້ແກ່ກຸ່ມໃຫຍ່ຟັງ.



**ຊຸກຍູ້ໃຫ້ມີການເຂົ້າຮ່ວມຢ່າງທ້າວທັນ**

ຜົນໄດ້ຮັບຂອງ ແຕ່ລະເຄື່ອງມື ຈະເປັນປະໂຫຍດ ກໍຕໍ່ເມື່ອຜູ້ເຂົ້າຮ່ວມຫມົດທຸກຄົນ ໄດ້ປະກອບສ່ວນ ຢ່າງທ້າວທັນ ທາງດ້ານແນວຄວາມຄິດ ແລະ ປະສົບປະການ. ແຕ່ມັນເປັນໄປບໍ່ໄດ້ ທີ່ ຈະໃຫ້ທຸກຄົນມີ ສ່ວນຮ່ວມຖ້າຫາກມີ ຜູ້ເຂົ້າຮ່ວມຫລາຍເກີນໄປ ໃນການເຮັດກັບເຄື່ອງມືໃດນຶ່ງ. ສະນັ້ນ, ໃນການ ເຮັດວຽກກັບເຄື່ອງມືໃດນຶ່ງນັ້ນ ຈຳນວນຜູ້ເຂົ້າຮ່ວມບໍ່ຄວນເກີນ 10-15 ຄົນ. ຖ້າມີຜູ້ເຂົ້າຮ່ວມຫລາຍ ທ່ານ ຕ້ອງໄດ້ແບ່ງເປັນກຸ່ມຍ່ອຍ ທີ່ມີຄວາມສົນໃຈ ຄ້າຍຄືກັນແລະນຳໃຊ້ເຄື່ອງມືອັນໃດນຶ່ງ.



## ການຈັດອັນດັບ, ໃຫ້ຄະແນນ ແລະ ການຊັ່ງຊາ

ທ່ານອາດມີຄວາມຕ້ອງການ ທີ່ຢາກຈະຮູ້ກ່ຽວກັບຄວາມມັກ ຂອງຊາວກະສິກອນ, ເຊັ່ນ: ບັນຫາໃດທີ່ເປັນບັນຫາສຳຄັນ ສຳລັບເຂົາເຈົ້າ ຫລືແມ່ນທາງເລືອກດ້ານເຕັກໂນໂລຊີໂຕໃດ ທີ່ ເຂົາເຈົ້າມັກ. ສະນັ້ນ,ເຕັກນິກທີ່ສາມາດ ຊ່ວຍທ່ານໄດ້ແມ່ນ ມີສາມເຕັກນິກງ່າຍ ເຊັ່ນ: ການຈັດອັນດັບ, ການໃຫ້ ຄະແນນ ແລະ ການຊັ່ງຊາ.

## ຈະນຳໃຊ້ເຕັກນິກການຈັດອັນດັບໄດ້ແນວໃດ

ການຈັດອັນດັບ ຈະເປັນເຕັກນິກທີ່ເປັນປະໂຫຍດໃນເວລາທີ່ທ່ານເຮັດວຽກ ຮ່ວມກັບຊາວກະສິກອນ ຫລາຍຄົນໃນເວລາດຽວກັນ. ໃຫ້ຊາວກະສິກອນ ເປັນຜູ້ບອກ ແລະຈັດລຽງໄປຕາມຄວາມມັກຂອງເຂົາເຈົ້າ, ໂດຍການເລີ່ມຈາກ ສິ່ງທີ່ເຂົາ ເຈົ້າມັກທີ່ສຸດ, ຫລັງຈາກນັ້ນທີ່ສອງແລະ ຕໍ່ ໆໄປ. ເພື່ອເປັນການຫລີກລຽງ ການໄດ້ຮັບຜົນສະເລ່ຍ ຈາກກອງປະຊຸມດັ່ງກ່າວນັ້ນ ທ່ານ ອາດຈະເອົາ "ບັດຈັດອັນດັບ" (ຄືຮູບທີ່ຢູ່ຂ້າງຂວານີ້) ໃຫ້ຊາວກະສິກອນ ແຕ່ລະຄົນ, ຊຶ່ງເຂົາເຈົ້າຈະຈີກເປັນນຳ້ເບີຕາມຮູບສີ່ລ່ຽມ ເພື່ອ ຈັດອັນດັບ ຕາມຄວາມມັກ ຂອງ ເຂົາເຈົ້າ. ໃນຮູບຕົວຢ່າງນີ້, ແມ່ນມີທີກອັນດັບ ແລະ ຫ້ອງສີ່ລ່ຽມ ທີ່ ມີຈ້ຳ 6 ອັນ ໝາຍວ່າເປັນຄວາມມັກສູງສຸດ.






ການນຳໃຊ້ເຄື່ອງມືດັ່ງກ່າວ ຈະເຮັດໃຫ້ໄວຂຶ້ນ ແລະ ສາມາດວິເຄາະຂໍ້ມູນໃຫ້ລະອຽດຂຶ້ນຕື່ມໄດ້. ຍົກຕົວຢ່າງ: ທ່ານສາມາດຫມາຍ ຫລື ນຳໃຊ້ "ບັດຈັດອັນດັບ" ທີ່ເປັນສີແຕກຕ່າງກັນໃຫ້ແກ່ຜູ້ຊາຍ ແລະ ແມ່ຍິງ, ຊຶ່ງທ່ານຈະສາມາດຮູ້ໄດ້ເຖິງຄວາມແຕກຕ່າງຂອງຄວາມມັກລະຫວ່າງຍິງ ແລະ ຊາຍໄດ້.

ໃນການຈັດອັນດັບ ແມ່ນ ມີຈຸດອ່ອນ ສອງ ຂໍ້ ຄື:

1 ມັນອາດເປັນການບັງຄັບຊາວກະສິກອນ ໃຫ້ຈັດລຽງຄວາມມັກ ຂອງເຂົາເຈົ້າ, ເພາະບາງຄັ້ງ ເຂົາເຈົ້າອາດມັກຫລາຍ ຢ່າງເທົ່າທຽມກັນ.

2 ມັນເປັນການວັດແທກຄວາມມັກທຳມະດາ ເພາະມັນບໍ່ສາມາດບອກໄດ້ວ່າ ຊາວກະສິກອນມັກຢ່າງນີ້ ຫລາຍກ່ວາຢ່າງນັ້ນ**ເທົ່າໃດ**

## ຈະນຳໃຊ້ເຕັກນິກການໃຫ້ຄະແນນໄດ້ແນວໃດ

ເຕັກນິກການໃຫ້ຄະແນນ ຈະເປັນປະໂຫຍດ ແລະ ໄດ້ຮັບຜົນດີ ໃນເວລາ ທີ່ທ່ານເຮັດວຽກຮ່ວມກັບຊາວກະສິກອນ ເປັນລາຍບຸກຄົນ. ຂັ້ນຕອນໃນ ການນຳໃຊ້ແມ່ນ ໃຫ້ຊາວກະສິກອນໃຫ້ຄະແນນ ແຕ່ລະຢ່າງ ແຕ່ 1 ຫາ 10 , ຊຶ່ງ 1 ຫມາຍວ່າມັກນ້ອຍ ແລະ 10 ແມ່ນ ມັກທີ່ສຸດ.

ຈຸດດີ ຂອງ ການໃຫ້ຄະແນນ ແມ່ນ ມັນສາມາດບອກໄດ້ວ່າ ຊາວກະສິກອນມັກຢ່າງນີ້ ຫລາຍກ່ວາຢ່າງ ອື່ນ ຫລາຍ **ເທົ່າໃດ**. ແຕ່ຂໍ້ເສຍ ແມ່ນ ບາງຄັ້ງຊາວກະສິກອນ ແມ່ນໃຫ້ຄະແນນແຕ່ລະຢ່າງໃກ້ຄຽງກັນ ເພື່ອບໍ່ຢາກໃຫ້ ພະນັກງານສົ່ງເສີມເສຍໃຈ.

ເຕັກນິກການໃຫ້ຄະແນນ ຍັງສາມາດນຳໃຊ້ຮ່ວມກັບຊາວກະສິກອນແບບເປັນກຸ່ມ, ໂດຍການນຳໃຊ້ "ບັດຄະແນນ" ຄືຕົວຢ່າງ ທີ່ ຢູ່ຂ້າງຊ້າຍນີ້. ທ່ານສາມາດຫມາຍ ບັດ ໂດຍ ການຂີດເປັນສີ ເພື່ອຊ່ວຍທ່ານ ໃຫ້ເຂົ້າໃຈເຖິງຄວາມຄິດເຫັນຂອງຊາວກະ ສິກອນໃນກຸ່ມຕ່າງ ໆ( ຕົວຢ່າງ ເຊັ່ນ ເອົາບັດທີ່ຫມາຍສີ ໃຫ້ແມ່ຍິງແລະ ບັດທີ່ບໍ່ໄດ້ຫມາຍໃຫ້ຜູ້ຊາຍ).




T P

## ຈະນຳໃຊ້ເຕັກນິກການຊັ່ງຊາ ໄດ້ແນວໃດ

ເຕັກນິກການໃຫ້ຄະແນນ ຈະເປັນປະໂຫຍດ ແລະ ໄດ້ຮັບຜົນດີ ໃນເວລາ ທີ່ທ່ານເຮັດວຽກຮ່ວມກັບຊາວກະສິກອນ ເປັນລາຍບຸກຄົນ. ຂັ້ນຕອນໃນການດຳເນີນການ ແມ່ນເອົາ " ".ໃນຈຳນວນສະເພາະ (ຕົວຢ່າງ ເຊັ່ນແກ່ນ ສາລີ 50 ແກ່ນ) ໃຫ້ແກ່ຊາວກະສິກອນ ແລະ ເຂົາເຈົ້າຈະຈັດແບ່ງຈຳນວນ ແກ່ນ ຫລື ເມັດສາລີ ລົງ ໃສ່ແຕ່ລະທາງເລືອກ ຕາມຄວາມມັກ ຫລື ຄວາມສຳຄັນ. ອັນໃດທີ່ສຳຄັນແມ່ນ ຈະໄດ້ຈຳນວນເມັດຫລາຍກ່ວາ.

ການຊັ່ງຊາ ແມ່ນ ຊ່ວຍໃຫ້ເຂົ້າໃຈວ່າ ຊາວກະສິກອນມັກຢ່າງນີ້ ຫລາຍ ກ່ວາຢ່າງອື່ນ **ຫລາຍປານໃດ**.



## ການຍ່າງສັງເກດບ້ານ

ກ່ອນທີ່ທ່ານຈະເລີ່ມຕົ້ນເຮັດວຽກໃນບ້ານໃດນຶ່ງ, ທ່ານຄວນຈະທຳຄວາມ ລຶ້ງເຄີຍ ກັບສະພາບພື້ນທີ່, ລະບົບການຜະລິດ, ຊັບພະຍາກອນ ທຳມະຊາດ, ບັນຫາ ແລະ ທ່າແຮງຂອງບ້ານດັ່ງກ່າວ. ການຍ່າງສັງເກດບ້ານ ແມ່ນ ເປັນວິທີທີ່ເຮັດໃຫ້ເຂົ້າໃຈເລິກຕື່ມອີກ. ການທີ່ມີຄວາມເຂົ້າໃຈກ່ຽວກັບບ້ານຈະຊ່ວຍໃຫ້ທ່ານສາມາດນຳພາການວິເຄາະບັນຫາ ແລະ ທ່າແຮງແບບມີສ່ວນຮ່ວມໄດ້ງ່າຍຂຶ້ນ.

### ຈະຈັດຕັ້ງການຍ່າງສັງເກດບ້ານແນວໃດ

ຂໍໃຫ້ຊາວກະສິກອນຜູ້ນຶ່ງ ຫລື ສອງຄົນ ເປັນຜູ້ນຳພາທ່ານ ຍ່າງເລາະເບິ່ງ ລະບົບການຜະລິດຕ່າງ ໆ ແລະ ແຫລ່ງຊັບພະຍາກອນທຳມະຊາດ ທີ່ມີຢູ່ ພາຍໃນບ້ານ. ໃນເວລາທີ່ທ່ານຍ່າງສັງເກດເບິ່ງນັ້ນ, ຖ້າຫາກເຫັນອັນໃດ ທີ່ເປັນໜ້າສົນໃຈ ຫລື ແຕກຕ່າງຈາກສິ່ງທີ່ທ່ານເຄີຍເຫັນ ແມ່ນ ຕ້ອງຢຸດ ແລະ ຖາມຊາວກະສິກອນ, ເຈາະຈົ້ມຄຳຕອບຂອງເຂົາເຈົ້າ ແລະ ສົມທຽບ ໃສ່ກັບອັນທີ່ທ່ານເຄີຍພົບພໍ້ມາກ່ອນແລ້ວ ໃນບ້ານອື່ນ ໆ.



N R

ທ່ານຕ້ອງຈຳໄວ້ວ່າ ທ່ານອາດຈະໄດ້ພາບລວມຂອງເລື້ອງຕ່າງ ໆ ພາຍໃນບ້ານແບບຈຳກັດ, ເພາະວ່າ ທ່ານໄດ້ສົນທະນາກັບຊາວກະສິກອນ ພຽງບໍ່ເທົ່າໃດຄົນເທົ່ານັ້ນ. ສະນັ້ນທ່ານຕ້ອງໄດ້ກວດຄືນກ່ຽວກັບ ເລື້ອງທີ່ເປັນໜ້າສົນໃຈຄືນອີກ ກັບຊາວກະສິກອນຫລາຍ ໆ ຄົນ, ຊຶ່ງທ່ານສາມາດຕັ້ງ ບັນຫາ ຫລື ເລື້ອງດັ່ງກ່າວຂຶ້ນມາ ໃນເວລາເຮັດການວິເຄາະແບບມີສ່ວນຮ່ວມ.

## ບາງຂໍ້ແນະນຳ...

- ຖ້າເປັນໄປໄດ້ ເຊີນຊາວກະສິກອນ ຈາກກຸ່ມ ຕ່າງໆ ພາຍໃນບ້ານ ເຂົ້າຮ່ວມການຍ່າງສັງເກດ ບ້ານ ຮ່ວມກັບທ່ານ, ເພາະມັນຈະຊ່ວຍ ທ່ານໃຫ້ເຫັນພາບຂອງບັນຫາ ແລະ ເລື້ອງຕ່າງ ໆ ພາຍໃນ ບ້ານໃຫ້ ກ້ວາງອອກຕື່ມ.
- ຖ້າຫາກມີພະນັກງານສົ່ງເສີມ ສອງ ຄົນ, ທ່ານສາມາດແຍກ ການຍ່າງສັງເກດ ອອກເປັນກຸ່ມ ຊຶ່ງມັນຈະງ່າຍຂຶ້ນ ແລະ ໄດ້ຮັບຜົນດີກ່ວາ. ພະນັກງານຜູ້ນຶ່ງ ຍົກຕົວຢ່າງ ອາດໄປນຳແມ່ຍິງ ແລະ ອີກຜູ້ນຶ່ງແມ່ນ ໄປນຳຜູ້ຊາຍ.







## ການແຕ້ມແຜນວາດບ້ານ

ການແຕ້ມແຜນວາດບ້ານ ຈະສະແດງໃຫ້ເຫັນເຖິງທີ່ຕັ້ງ ຂອງຈຸດຕ່າງ ໆ ແລະ ຊັບພະຍາກອນ ທີ່ຊາວກະສິກອນເຫັນວ່າສຳຄັນ ສຳລັບບ້ານຂອງ ເຂົາ ເຈົ້າ. ໂດຍປົກກະຕິ, ການແຕ້ມແຜນວາດບ້ານ ແມ່ນເປັນຫນ້າວຽກ ທຳອິດ ທີ່ເຮັດຮ່ວມກັບຊາວກະສິກອນ ໃນການວິເຄາະບັນຫາ ແລະ ທ່າແຮງ ແບບມີສ່ວນຮ່ວມ. ເຄື່ອງມືດັ່ງກ່າວ ຈະຊ່ວຍໃນການຂ້າມຜ່ານຂໍ້ຈຳກັດ ທາງດ້ານສັງຄົມແລະ ຊຸກຍູ້ໃຫ້ຊາວກະສິກອນແຕ່ລະຄົນໄດ້ມີສ່ວນຮ່ວມ ໃນກອງປະຊຸມຢ່າງຫ້າວຫັນ.

### ຈະເຮັດແນວໃດໃນການແຕ້ມແຜນວາດບ້ານ

ໃຫ້ຊາວກະສິກອນແຕ້ມຈຸດສຳຄັນຕ່າງ ໆ ແລະ ແຫລ່ງຊັບພະຍາກອນ ທຳມະຊາດ ທີ່ມີຢູ່ໃນບ້ານ. ສ່ວນໃຫຍ່, ຊາວກະສິກອນ ມັກເລີ່ມດ້ວຍການແຕ້ມຂອບເຂດ ຂອງ ບ້ານ, ຫົນທາງ, ເຮືອນ, ແມ່ນ້ຳ, ໂຮງຮຽນ ແລະ ສະຖານທີ່ທົ່ວໄປຕ່າງ ໆ. ທ່ານສາມາດແນະນຳໃຫ້ຊາວກະສິກອນ ແຕ້ມຊາຍແດນ ຫລື ຂອບເຂດບ້ານກ່ອນ, ເພາະວ່າບາງຄັ້ງ ຊາວກະສິກອນຈະເລີ່ມແຕ້ມທຸກສິ່ງ ລົງຢ່າງ

ລະອຽດ ແລະ ສຸດທ້າຍແມ່ນເຫັນວ່າເຈັ້ຍຈະບໍ່ພໍ ສຳລັບການແຕ້ມ ແຫລ່ງຊັບພະຍາກອນອື່ນໆ ຂອງບ້ານ. ສະນັ້ນ, ຄວນຊຸກຍູ້ໃຫ້ເຂົາເຈົ້າແຕ້ມ ແຫລ່ງຊັບພະຍາກອນທາງດ້ານທຳມະຊາດ ແລະ ກະສິກຳ ເຂົ້າດ້ວຍ ເຊັ່ນ: ເຂດປູກຝັງ, ເນື້ອທີ່ລ້ຽງສັດ, ປ່າໄມ້, ໜອງປາ ແລະ ອື່ນ ໆ.

## ຕ້ອງຮັບປະກັນວ່າ...

- ຊາວກະສິກອນເປັນຜູ້ແຕ້ມເອງ, ບໍ່ແມ່ນທ່ານ! ສິ່ງສຳຄັນ ແມ່ນ ຄວາມເຂົ້າໃຈ ຂອງ ເຂົາເຈົ້າ, ແຕ່ບໍ່ແມ່ນ ຂອງ ທ່ານ.
- ໃນການແຕ້ມແຜນວາດ ບໍ່ຄວນໃຫ້ໃຜຜູ້ນຶ່ງ ເປັນຜູ້ຄວບຄຸມການແຕ້ມ. ໂດຍທົ່ວໄປ, ນາຍບ້ານ ອາດເປັນຜູ້ເລີ່ມກ່ອນ, ແຕ່ຖ້າທ່ານຫາກ ຊຸກຍູ້ໃຫ້ຜູ້ອື່ນ ໆ ໄດ້ມີສ່ວນຮ່ວມໃນການແຕ້ມ ແລະ ຜ່ານໄປໄລຍະໃດນຶ່ງ, ທ່ານຈະເຫັນວ່າມີຫລາຍ ໆ ຄົນເຂົ້າຮ່ວມເປັນຢ່າງດີ.



T P




T P



## ການວິເຄາະຖານະຄອບຄົວ

ຈະຢູ່ໃນບ້ານໃດກໍຕາມການດຳລົງຊີວິດ ແມ່ນ ມີຄວາມແຕກຕ່າງກັນ. ບາງຄົນອາດທຸກ ແລະ ບາງຄົນອາດມີຖານະດີກ່ວາ. ການວິເຄາະຖານະຄອບຄົວ ແມ່ນ ເປັນເຄື່ອງມື ທີ່ ຈະຊ່ວຍທ່ານໃນການ:

- ກຳນົດກຸ່ມ ຕ່າງ ໆ ທີ່ມີຖານະແຕກຕ່າງກັນ
- ຊອກຫາຊາວກະສິກອນພາຍໃນບ້ານ ວ່າຜູ້ໃດຈະຢູ່ໃນກຸ່ມໃດ
- ເຂົ້າໃຈແຈ້ງກ່ຽວກັບຄຸນລັກສະນະ ຂອງ ແຕ່ລະກຸ່ມ
- ເຂົ້າໃຈວ່າເປັນຫຍັງບາງຄົນຈຶ່ງທຸກ ແລະ ບາງຄອບຄົວຈຶ່ງມີ ຖານະ ດີກ່ວາ

ການນຳໃຊ້ຜົນໄດ້ຮັບຈາກການວິເຄາະຖານະຄອບຄົວ ທ່ານສາມາດວາງເປົ້າໝາຍ ຂອງໜ້າວຽກ ທີ່ຈະເຮັດກັບກຸ່ມໃດນຶ່ງສະເພາະຢູ່ໃນບ້ານ (ຕົວຢ່າງ, ຄອບຄົວທີ່ທຸກຈົນ ແມ່ນ ຈະບໍ່ໄດ້ຮັບຜົນປະໂຫຍດຫຍັງໝົດ ຈາກ ເຕັກໂນໂລຊີ ທີ່ ຊ່ວຍປັບປຸງການລ້ຽງສັດໃຫຍ່, ເພາະວ່າເຂົາເຈົ້າ ມີ ແຕ່ສັດນ້ອຍ).



P H

ທ່ານຄວນຈຳໄວ້ວ່າ ຜົນຂອງການວິເຄາະຖານະຄອບຄົວ ບໍ່ສາມາດຈະນຳໃຊ້ ຫລື ເວົ້າໄດ້ວ່າ ໃນບ້ານນີ້ ມີຊາວກະສິກອນຜູ້ທຸກຈົນ ຫລາຍກ່ວາບ້ານນັ້ນ, ເພາະວ່ານິຍາມ ຫລື ຄຸນລັກສະນະຂອງ ຄຳວ່າທຸກຈົນ ຫລື ຮັ່ງມີ ແມ່ນ ອາດແຕກຕ່າງກັນໃນແຕ່ລະບ້ານ.

## ຈະເຮັດແນວໃດ ໃນການວິເຄາະຖານະຄອບຄົວ

ຖາມຊາວກະສິກອນວ່າ:

1 ໃນບ້ານດັ່ງກ່າວ ແມ່ນ ມີຈັກກຸ່ມທີ່ແຕກຕ່າງກັນທາງດ້ານຖານະບໍ່ ແລະ ໃຫ້ເຂົາເຈົ້າອະ ທິບາຍກ່ຽວກັບແຕ່ລະກຸ່ມ. ຕົວຢ່າງ, ຊາວ ກະສິກອນ ອາດເວົ້າວ່າ ໃນບ້ານນີ້ ແມ່ນ ມີ ສາມ ກຸ່ມທີ່ແຕກຕ່າງກັນ ຄື "ທຸກ" (ຫລື ຄອບຄົວທີ່ຂາດເຂົ້າກິນໃນແຕ່ລະປີ), "ປານກາງ" (ຫລື ສ່ວນໃຫຍ່ແມ່ນກຸ້ມກິນ) ແລະ "ຮັ່ງມີ" (ຫລື ມີເຂົ້າກຸ້ມກິນ ຕະຫລອດ ແລະ ເຫລືອເປັນບາງຄັ້ງຄາວ).

2 ຈັດຄອບຄົວຕ່າງ ໆ ໃສ່ໃນກຸ່ມຖານະເຫລົ່ານີ້. ວິທີການນຶ່ງທີ່ ສາມາດເຮັດໄດ້ ແມ່ນ ການໝາຍ ເຮືອນແຕ່ລະຫລັງໃນແຜນວາດບ້ານ ໂດຍໝາຍສີໃສ່ ຕາມກຸ່ມຖານະຕ່າງ ໆ ທີ່ ຄອບຄົວດັ່ງ ກ່າວຂຶ້ນກັບ.